ບົດລາຍງານຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019

1. ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບບໍລິສັດມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30/11/2017, ແລະ ໄດ້ເພີ່ມທຶນ, ຈຳນວນຮຸ້ນ ແລະ ປ່ຽນແປງອັດຕາສ່ວນການຖືຮຸ້ນ ອີງຕາມໃບທະບຽນວິສາຫະກິດເລກທີ 0833/ຈທວ, ລົງວັນທີ 29 ພຶດສະພາ 2019 ຂອງ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ບໍລິສັດໄດ້ສຳເລັດການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019.

ປະຈຸບັນ ການຖືຮຸ້ນຂອງບໍລິສັດ: ບໍລິສັດ ພັດທະນາ ສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ຖືຮຸ້ນ 65.21689% ຂອງຮຸ້ນທັງໝົດ, ນັກລົງທຶນພາຍໃນ ແລະ ນັກລົງທຶນຕ່າງປະເທດ 34.78311%.

ກິດຈະການຫຼັກຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັ້ນເຕີ ແລະ ຫ້ອງເອົາເປີເຊັ້ນ ຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງ ເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການ ເກັບຄ່າເຊົ່າ, ການເກັບຄ່າເຊົ່າສຳນັກງານຫ້ອງການ ໂດຍພັດທະນາ ແລະ ບໍລິການໃຫ້ເຊົ່າພື້ນທີ່ສຳນັກງານຫ້ອງການ.

ທຶນຈົດທະບຽນ

ທຶນຈົດທະບຽນໃນປະຈຸບັນແມ່ນ 147,199,900,000 ກີບ.

ທີ່ຕັ້ງ

ບໍລິສັດຕັ້ງຢູ່ ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

2. ໂຄງຮ່າງການຈັດຕັ້ງ

2.1 ໂຄງຮ່າງການຈັດຕັ້ງ ວຈຊຕ: ປະກອບດ້ວຍສະມາຊິກສະພາບໍລິຫານ 11 ທ່ານ, ໃນນັ້ນປະກອບມີຜູ້ອຳນວຍການ

2.2 ສະພາບໍລິຫານ ແລະ ອຳນວຍການ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ປະກອບດ້ວຍ 11 ທ່ານ:

- ທ່ານ ເວີຍ ຫວາ (Mr. Wei Hua) ເປັນປະທານ
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ
- ທ່ານ ຫຼີ ສ່ຽວຕົງ (Mr. Li Xiaodong) ເປັນສະມາຊິກ, ຜູ້ອຳນວຍການ
- ທ່ານ ຫຼົວ ກວາງຊ້ານ (Mr. Liu Guangcan) ເປັນສະມາຊິກ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
- ທ່ານ ສາຍ ຈ້ຽນຫົງ (Mr. Chai Jianhong) ເປັນສະມາຊິກ
- ທ່ານ ບຸລະພາ ສັນຕິຄົງຄາ ເປັນສະມາຊິກ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ
- ທ່ານນາງ ເຕີ້ງ ຢູ່ (Ms. Deng Yu) ເປັນສະມາຊິກອິດສະຫຼະ
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ
- ທ່ານ ຫຼູ ຈ້ຽນ (Mr. Lu Jian) ເປັນສະມາຊິກອິດສະຫຼະ

3. ຜົນການດຳເນີນທຸລະກິດ

ບໍລິສັດມີລາຍຮັບລວມໃນ 6 ເດືອນຕົ້ນປີ 2019 ເທົ່າກັບ 15,252,135,485 ກີບ, ກຳໄລກ່ອນອາກອນ 6,913,012,444 ກີບ, ກຳໄລສຸດທິ 5,599,540,080 ກີບ, ກຳໄລຕໍ່ຮຸ້ນແມ່ນ 53.30 ກີບ.

4. ແຜນການດຳເນີນທຸລະກິດ

ອີງຕາມແຜນການນຳໃຊ້ທຶນທີ່ໄດ້ເປີດເຜີຍໃນໜັງສືຊວນຊື້, ບໍລິສັດມີແຜນການດຳເນີນທຸລະກິດໃນ 6 ເດືອນທ້າຍປີ 2019 ວ່າ ຈະຮັບຊື້ຊັບສິນບາງສ່ວນຂອງໂຄງການສູນການຄ້າທ່ອງທ່ຽວສາກົນວຽນຈັນເຊິ່ງເປັນກຳມະສິດຂອງບໍລິສັດ ພັດທະນາສູນເສດຖະກິດ ການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ, ເພາະການຊື້ຂາຍຊັບສິນດັ່ງກ່າວ ແມ່ນເປັນລາຍການທີ່ກ່ຽວພັນ ຈຶ່ງຕ້ອງສະເໜີໃຫ້

ກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດແລ້ວຈຶ່ງມີການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ບໍລິຫານ.

ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Li XiaoDong